ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຜນການ ແລະ ການລົງທຶນ

ເລກທີ 3006/ກຜທ

ນະຄອນຫຼວງວຽງຈັນ, ວັນທີ: 09 ທັນວາ 2022

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ
# ຂອງສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ

- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງ ແຜນການ ແລະ ການລົງທຶນ ສະບັບເລກທີ 636/ນຍ, ລົງວັນທີ 26 ພະຈິກ 2021;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການໂຮມສູນຝຶກອົບຮົມພະນັກງານຄຸ້ມຄອງເສດຖະກິດ-ແຜນການ ເຂົ້າກັບສະຖາບັນຄົ້ນຄວ້າວິໄຈການພັດທະນາ ສະບັບເລກທີ 1847/ ກຜທ, ລົງວັນທີ 05 ສິງຫາ 2022.
- ອີງຕາມ ໜັງສືສະເໜີ ຂອງສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ ສະບັບເລກທີ 392/ກຜທ. ສຄຜ, ລົງວັນທີ 24 ພະຈິກ 2022;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 1298/ກຜທ.ກຈພ2, ລົງວັນທີ 05 ທັນວາ 2022.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບກົງຈັກການຈັດຕັ້ງ, ຫຼັກການເຄື່ອນໄຫວ ແລະ ແບບແຜນວິທີເຮັດວຽກຂອງສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ ເພື່ອເປັນບ່ອນອີງທາງດ້ານນິຕິກຳ ໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວໜ້າທີ່ວຽກງານຂອງຕົນໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນສູງ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະສູນຝຶກອົບຮົມ ມີຊື່ຫຍໍ້ເປັນພາສາລາວວ່າ "**ສຄອ**" ແລະ ຂຽນເປັນພາສາອັງກິດວ່າ Development Research Institute and Training Center ໂດຍມີຊື່ຫຍໍ້ວ່າ "**DRIT**", ມີຖານະທຽບເທົ່າກັບກົມ ສັງກັດໃນໂຄງປະກອບກົງຈັກການຈັດຕັ້ງ ຂອງ ກະຊວງແຜນການ ແລະ ການລົງທຶນ, ມີພາລະ

ບົດບາດເປັນເສນາທິການໃຫ້ແກ່ ກະຊວງ ໃນການຄົ້ນຄ້ວາ, ສ້າງຍຸດທະສາດ, ແຜນແມ່ບົດ, ນະໂຍບາຍ ແລະ ມາດຕະການກ່ຽວກັບການພັດທະນາເສດຖະກິດ-ສັງຄົມ ລະດັບຊາດ ແລະ ທ້ອງຖິ່ນ ດຳເນີນການຄົ້ນຄວ້າ-ວິໄຈຫົວຂໍ້ຕ່າງໆ ທີ່ຕິດພັນກັບສະພາບການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ ເພື່ອສະໜອງຂໍ້ມູນ ແລະ ໃຫ້ຄຳສະ ເໜີ ແລະ ມີຄຳເຫັນ ດ້ານນະໂຍບາຍໃຫ້ແກ່ກະຊວງແຜນການ ແລະ ການລົງທຶນ ເພື່ອພິຈາລະນານຳສະເໜີຕໍ່ລັດຖະບານ, ຈັດຝຶກອົບຮົມ ແລະ ຍົກລະດັບຄວາມຮູ້ຄວາມສາມາດທາງດ້ານວຽກງານຄຸ້ມຄອງເສດຖະກິດ-ແຜນການ ໃຫ້ພະນັກງານຂະແໜງແຜນການ ແລະ ການລົງທຶນ ໃນການເຄື່ອນໄຫວເຮັດໜ້າທີ່ວຽກງານການຄຸ້ມຄອງເສດຖະກິດ-ແຜນການ ໃນຂອບເຂດທົ່ວປະເທດ ໃນແຕ່ລະໄລຍະ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

1. ຜັນຂະຫຍາຍ ແລະ ຫັນເອົາແນວທາງຂອງພັກ, ມະຕິ, ຄຳສັ່ງ ແລະ ນະໂຍບາຍຂອງລັດຖະບານ ເຂົ້າໃນວຽກງານຄົ້ນຄວ້າດ້ານນະໂຍບາຍການພັດທະນາເສດຖະກິດ-ສັງຄົມ, ວຽກງານຝຶກອົບຮົມ ແລະ ພັດທະນາພະນັກງານ-ລັດຖະກອນ ໃນວຽກງານຄຸ້ມຄອງເສດຖະກິດ-ແຜນການ ໃຫ້ເປັນແຜນການ, ແຜນງານ, ໂຄງການອັນລະອຽດ ແລະນຳສະເໜີຄະນະນຳ ກະຊວງ ແຜນການ ແລະການລົງທຶນ ພິຈາລະນາຕົກລົງ ແລະ ຈັດຕັ້ງປະຕິບັດ;
2. ຄົ້ນຄວ້າສ້າງວິໄສທັດ, ຍຸດທະສາດ ແລະ ແຜນແມ່ບົດການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະການເຊື່ອມໂຍງພາກພື້ນ ແລະ ສາກົນ ໃນແຕ່ລະໄລຍະ;
3. ຄົ້ນຄວ້າ ແລະ ສະເໜີຄຳເຫັນດ້ານນະໂຍບາຍຕ່າງໆທີ່ຕິດພັນກັບການວາງແຜນ, ຕິດຕາມ ແລະ ປະເມີນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແຕ່ລະໄລຍະ ໂດຍປະສານສົມທົບກັບບັນດາກົມກອງພາຍໃນກະຊວງ ແລະ ຂະແໜງການຕ່າງໆ;
4. ຄົ້ນຄວ້າ, ຕິດຕາມ ແລະ ປະເມີນສະພາບເສດຖະກິດມະຫາພາກປະຈຳເດືອນ, ໄຕມາດ ແລະ ປະຈຳປີ ເພື່ອນຳສະເໜີທາງດ້ານນະໂຍບາຍ ແລະ ມາດຕະການກ່ຽວກັບການຄຸ້ມຄອງ ແລະ ແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດມະຫາພາກໃນແຕ່ລະໄລຍະ; ທັງລົງເລິກຄົ້ນຄວ້າການປະຕິຮູບດ້ານເສດຖະກິດ, ການຫັນປ່ຽນໂຄງສ້າງເສດຖະກິດ, ການເຕີບໂຕທີ່ມີຄຸນນະພາບ ແລະ ຍືນຍົງ ແລະ ການຫັນເປັນອຸດສາຫະກຳທັນສະໄໝ ແລະ ອື່ນໆ;
5. ຄົ້ນຄວ້າ, ຕິດຕາມ ແລະ ປະເມີນການຈັດຕັ້ງປະຕິບັດນະໂຍບາຍການພັດທະນາດ້ານສັງຄົມ,ດ້ານສິ່ງແວດລ້ອມ ແລະ ດ້ານພັດທະນາເຂດແຄວ້ນ ເພື່ອແກ້ໄຂຄວາມທຸກຍາກ ທາງດ້ານການພັດທະນາຊົນນະບົດ, ເຂດຈຸດສຸມການພັດທະນາ ແລະ ບັນດາຕົວຊີ້ວັດດ້ານສັງຄົມ ເພື່ອສະໜອງຂໍ້ມູນ ແລະ ສະເໜີຄຳເຫັນດ້ານນະໂຍບາຍຕໍ່ການສ້າງ ແລະ ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;
6. ຄົ້ນຄວ້າ, ສ້າງ ແລະ ພັດທະນາເນື້ອໃນຫລັກສູດຝຶກອົບຮົມວຽກງານຄຸ້ມຄອງເສດຖະກິດ-ແຜນການ ແລະວຽກງານວິຊາສະເພາະຕາມຫົວຂໍ້ຕ່າງໆ, ຕາມການກຳນົດຫົວຂໍ້ຫຼັກສູດ ໂດຍການປະສານສົມທົບ ກັບບັນດາກົມວິຊາການ ແລະ ທຽບເທົ່າກົມ ພາຍໃນ ກະຊວງ ແຜນການ ແລະ ການລົງທຶນ ແລະ ຂະແໜງການທີ່ກ່ຽວຂ້ອງພາຍໃນ ແລະ ຕ່າງປະເທດ ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງປະເທດ ແລະ ຍຸດທະສາດການພັດທະນາຊັບພະຍາກອນມະນຸດຂອງຂະແໜງແຜນການ ແລະ ການລົງທຶນ;

7. ເປັນໃຈກາງປະສານງານ ກັບບັນດາກົມພາຍໃນກະຊວງ ແລະ ຮັບຜິດຊອບໃນການຄຸ້ມຄອງຫຼັກສູດການຝຶກອົບຮົມ, ຈັດຕັ້ງຝຶກອົບຮົມດ້ານວິຊາການ, ກໍ່ສ້າງ ແລະ ຍົກລະດັບຄວາມຮູ້ຄວາມສາມາດ, ທັກສະໃນການປະຕິບັດໜ້າທີ່ວຽກງານການຄຸ້ມຄອງເສດຖະກິດ-ແຜນການ ໃຫ້ພະນັກງານທີ່ກ່ຽວຂ້ອງຕາມແຜນການກໍ່ສ້າງບຸກຄະລາກອນ ຂອງຂະແໜງແຜນການ ແລະ ການລົງທຶນ, ສ້າງ ແລະ ພັດທະນາຄູຝຶກ, ຜູ້ຊ່ວຍຄູຝຶກ ແລະ ຜູ້ບໍລິຫານຝຶກອົບຮົມ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ;
8. ສ້າງ ແລະ ຄຸ້ມຄອງລະບົບຖານຂໍ້ມູນຂະແໜງເສດຖະກິດ-ສັງຄົມ,ຖານຂໍ້ມູນຝຶກອົບຮົມ ເພື່ອຮັບໃຊ້ວຽກງານການຄົ້ນຄວ້າ ແລະ ເຜີຍແຜ່ບັນດາຜົນຂອງການຄົ້ນຄວ້າ ແລະ ການຝຶກອົບຮົມ ຕາມການເຫັນດີຂອງຄະນະນຳກະຊວງ ແຜນການ ແລະ ການລົງທຶນ;
9. ສ້າງ, ຄຸ້ມຄອງ ແລະ ຊຸກຍູ້ແຜນປະຕິບັດງານ, ລະບົບການປະສານງານ, ລະບົບ IT ແລະ ລະບົບສ່ອງແສງລາຍງານສະພາບການເຄື່ອນໄຫວໜ້າທີ່ວຽກງານພາຍໃນສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ;
10. ຄຸ້ມຄອງ ແລະ ຍົກລະດັບຄວາມຮູ້ຄວາມສາມາດດ້ານເຕັກນິກວິຊາການຄົ້ນຄວ້າໃຫ້ແກ່ພະນັກງານ-ລັດຖະກອນ ທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບ ຂອງສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ;
11. ປະຕິບັດໜ້າທີ່ວຽກງານອື່ນໆຕາມການມອບໝາຍຂອງຄະນະນຳຂອງ ກະຊວງ ແຜນການ ແລະ ການລົງທຶນ.

**ມາດຕາ 4 ຂອບເຂດສິດ**

1. ປະສານສົມທົບ ແລະ ຮ່ວມມືກັບບັນດາສະຖາບັນຄົ້ນຄວ້າ-ສຶກສາ, ບັນດາອົງກອນຕ່າງໆຂອງພາກລັດ, ເອກະຊົນ ແລະ ບັນດາອົງການຈັດຕັ້ງສາກົນຕ່າງໆຕາມການເຫັນດີຂອງຄະນະນຳ ກະຊວງແຜນການ ແລະການລົງທຶນ ເພື່ອສັງລວມຂໍ້ມູນ, ຄົ້ນຄວ້າ-ວິໄຈ ແລະ ນຳສະເໜີນະໂຍບາຍທີ່ຕິດພັນກັບການພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ ໃຫ້ແກ່ ກະຊວງແຜນການ ແລະ ການລົງທຶນ;
2. ເປັນເຈົ້າການປະສານສົມທົບກັບບັນດາກົມ, ທຽບເທົ່າກົມພາຍໃນ ກະຊວງແຜນການ ແລະ ການລົງທຶນ ແລະພາກສ່ວນກ່ຽວຂ້ອງປຶກສາຫາລື ແລະ ຄົ້ນຄວ້າ ເພື່ອກຳນົດຫົວຂໍ້, ເນື້ອໃນຫລັກສູດ, ຄູ່ມື ແລະ ກຳນົດວິທະຍາກອນຮັບໃຊ້ໃຫ້ແກ່ການຈັດຝຶກອົບຮົມ, ສ້າງ ແລະ ຄຸ້ມຄອງບັນດາຫຼັກສູດ ແລະ ຖານຂໍ້ມູນການຝຶກອົບຮົມ;
3. ສະເໜີບັນດາຫົວຂໍ້ຄົ້ນຄວ້າ ແລະ ດຳເນີນການຄົ້ນຄວ້າວິໄຈຫົວຂໍ້ຕ່າງໆທີ່ຕິດພັນກັບພາລະບົດບາດ ແລະຕາມການມອບໝາຍຂອງຂັ້ນເທິງ;
4. ສະເໜີຂັ້ນເທິງພິຈາລະນາຮັບຮອງ ແລະ ເຜີຍແຜ່ຜົນການຄົ້ນຄວ້າ ຂອງສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ຝຶກອົບຮົມ ອອກສູ່ສັງຄົມດ້ວຍຮູບການຕ່າງໆທີ່ເໝາະສົມ ຕາມການຕົກລົງເຫັນດີຂອງຄະນະນຳກະຊວງແຜນການ ແລະ ການລົງທຶນ;
5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອລະດົມການຮ່ວມມືຊ່ວຍເຫຼືອດ້ານທຶນການຄົ້ນຄວ້າ, ເຕັກນິກວິຊາການ ແລະ ອື່ນໆ ທີ່ຕິດພັນກັບວຽກງານການຄົ້ນຄວ້າ ແລະ ຝຶກອົບຮົມຈາກພາຍໃນ ແລະຕ່າງປະເທດຕາມການເຫັນດີ ຂອງຄະນະນຳກະຊວງແຜນການ ແລະ ການລົງທຶນ;
6. ສະເໜີຈັດ, ດຳເນີນ ແລະເຂົ້າຮ່ວມກອງປະຊຸມວິທະຍາສາດ-ວິຊາການ, ການຝຶກອົບຮົມ ແລະ ແລກປ່ຽນຖອດຖອນບົດຮຽນທັງພາຍໃນ ແລະຕ່າງປະເທດ ຕາມການຕົກລົງເຫັນດີຂອງຄະນະນຳ ກະຊວງແຜນການ ແລະ ການລົງທຶນ;

7. ສະເໜີຕໍ່ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ເພື່ອພິຈາລະນາຕົກລົງສ້າງຕັ້ງ, ປັບປຸງ ຫຼື ລົບລ້າງກົງຈັກການຈັດຕັ້ງ ຂອງສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ ໃຫ້ສອດຄ່ອງ ໂດຍປະສານສົມທົບກັບກົມຈັດຕັ້ງ ແລະ ພະນັກງານ;
8. ຄົ້ນຄວ້າ ແລະ ນຳສະເໜີຕໍ່ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ເພື່ອພິຈາລະນາແຕ່ງຕັ້ງ, ເລື່ອນຊັ້ນ-ເລື່ອນຂັ້ນ, ຍ້ອງຍໍຜົນງານ, ຊັບຊ້ອນ, ຍົກຍ້າຍ, ປົດຕຳແໜ່ງ ຫຼື ປະຕິບັດວິໄນຕໍ່ພະນັກງານທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບ ຂອງສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ ໂດຍຜ່ານການເຫັນດີຈາກກົມຈັດຕັ້ງ ແລະ ພະນັກງານ;
9. ສະເໜີຄະນະນຳກະຊວງແຜນການ ແລະ ການລົງທຶນ ສ້າງຕັ້ງຄະນະ-ໜ່ວຍງານສະເພາະກິດ ແລະ ແຕ່ງຕັ້ງພະນັກງານ-ລັດຖະກອນ ເຂົ້າໃນຄະນະ-ໜ່ວຍງານຕ່າງໆ ເພື່ອປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍຈາກຂັ້ນເທິງ;
10. ສະເໜີລັດຖະມົນຕີ ກະຊວງ ແຜນການ ແລະ ການລົງທຶນ ພິຈາລະນາອະນຸມັດສິດໃນການເຊັນສັນຍາ ແລະປະຕິບັດບົດບັນທຶກການຮ່ວມມືດ້ານການຄົ້ນຄວ້າ ແລະ ແລກປ່ຽນດ້ານວິຊາການຮ່ວມກັບບັນດາສະຖາບັນການຄົ້ນຄວ້າ-ສຶກສາ ແລະ ອົງກອນທັງພາຍໃນ ແລະ ຕ່າງປະເທດ ໂດຍຜ່ານກົມກອງທີ່ກ່ຽວຂ້ອງ;
11. ສະເໜີຂຶ້ນແຜນ ແລະ ຄຸ້ມຄອງ-ບໍລິຫານການນຳໃຊ້ງົບປະມານ, ພາຫະນະ ແລະ ວັດຖຸອຸປະກອນທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ ເພື່ອຊຸກຍູ້ການຈັດຕັ້ງປະຕິບັດວຽກງານ ຂອງສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ;
12. ປະຕິບັດສິດອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກການຈັດຕັ້ງ

ໂຄງປະກອບກົງຈັກ ຂອງສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ ປະກອບມີ:
1. ພະແນກ ຄົ້ນຄວ້າສັງລວມ ແລະ ຂໍ້ມູນຂ່າວສານ;
2. ພະແນກ ຄົ້ນຄວ້ານະໂຍບາຍເສດຖະກິດ;
3. ພະແນກ ຄົ້ນຄວ້ານະໂຍບາຍສັງຄົມ ແລະ ຫຼຸດຜ່ອນຄວາມທຸກຍາກ;
4. ພະແນກ ຄົ້ນຄວ້ານະໂຍບາຍພັດທະນາເຂດແຄ້ວນ ແລະ ສິ່ງແວດລ້ອມ;
5. ພະແນກ ຝຶກອົບຮົມ.

### ມາດຕາ 6 ໂຄງປະກອບບຸກຄະລາກອນ

ບຸກຄະລາກອນ ຂອງສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ ປະກອບມີ:
1. ຫົວໜ້າສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ 1 ທ່ານ (ມີຖານະທຽບເທົ່າຫົວໜ້າກົມ) ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີໂດຍສອດຄ່ອງຕາມກົດໝາຍ ແລະ ລະບຽບການ, ມີຄວາມຮັບຜິດຊອບຕໍ່ລັດຖະມົນຕີກະຊວງແຜນການ ແລະການລົງທຶນ ກ່ຽວກັບຜົນສຳເລັດ ແລະ ຂໍ້ບົກຜ່ອງຕ່າງໆ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້;

2. ຮອງຫົວໜ້າສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ ຈໍານວນໜຶ່ງ ເຊິ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງໂດຍລັດຖະມົນຕີ ກະຊວງ ແຜນການ ແລະ ການລົງທຶນ ຕາມການສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ ໂດຍສອດຄ່ອງຕາມກົດໝາຍ ແລະ ລະບຽບການ, ມີຄວາມຮັບຜິດຊອບຊ່ວຍຫົວໜ້າສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ ໃນການຊີ້ນໍາວຽກງານ ແລະ ລົງເລິກຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍຈາກຫົວໜ້າສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ, ມີຄວາມຮັບຜິດຊອບຕໍ່ຫົວໜ້າສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມກ່ຽວກັບຜົນສໍາເລັດ ແລະ ຂໍ້ບົກຜ່ອງຕ່າງໆ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້;

   - ໃນເວລາທີ່ຫົວໜ້າສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ ບໍ່ຢູ່ ຮອງຫົວໜ້າສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ ເປັນຜູ້ຮັກສາການແທນຕາມການມອບໝາຍ ຢ່າງເປັນລາຍລັກອັກສອນ ຂອງຫົວໜ້າສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ;
3. ຫົວໜ້າພະແນກ, ຮອງຫົວໜ້າພະແນກ ຈໍານວນໜຶ່ງທີ່ໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງໂດຍລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ຕາມການສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ ໂດຍສອດຄ່ອງຕາມລະບຽບການ, ກົດໝາຍ ແລະ ຕາມການກໍານົດຕໍາແໜ່ງງານ, ມີຄວາມຮັບຜິດຊອບກ່ຽວກັບຜົນສໍາເລັດ ແລະ ຂໍ້ບົກຜ່ອງຕ່າງໆ ໃນຂົງເຂດວຽກງານທີ່ຕົນຮັບຜິດຊອບ.

## ໝວດທີ 4
## ໜ້າທີ່ຂອງແຕ່ລະພະແນກ

**ມາດຕາ 7 ພະແນກ ຄົ້ນຄວ້າສັງລວມ ແລະ ຂໍ້ມູນຂ່າວສານ**

1. ເປັນເສນາທິການໃຫ້ແກ່ສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ ໃນການສ້າງແຜນ, ສັງລວມ ແລະ ລາຍງານການຈັດຕັ້ງປະຕິບັດແຜນວຽກງານການຄົ້ນຄວ້ານະໂຍບາຍ ຂອງສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ ໂດຍປະສານສົມທົບກັບທຸກພະແນກໃນແຕ່ລະໄລຍະ (ປະຈໍາອາທິດ, ເດືອນ, ໄຕມາດ ແລະ ປະຈໍາປີ);
2. ຮັບຜິດຊອບວຽກງານຂາເຂົ້າ-ຂາອອກ, ຄຸ້ມຄອງຕາປະທັບ, ສໍາເນົາ, ແຈກຈ່າຍ ແລະ ນໍາສົ່ງເອກະສານ, ຄົ້ນຄວ້າສັງລວມ ແລະ ຕິດຕາມບັນດາເອກະສານເຂົ້າ-ອອກຕ່າງໆ ຂອງສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ;
3. ເປັນໃຈກາງປະສານງານກັບບັນດາກົມ ແລະ ຫ້ອງການຕ່າງໆຂອງກະຊວງແຜນການ ແລະ ການລົງທຶນ ກໍ່ຄືອົງການຈັດຕັ້ງພາຍໃນ ແລະ ສາກົນ ເພື່ອອໍານວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ ໃຫ້ມີຄວາມທັນສະໄໝ, ວ່ອງໄວ ແລະ ທັນກັບກໍານົດເວລາ;
4. ເປັນເຈົ້າການຄົ້ນຄວ້າ ແລະ ຮ່າງບັນດາເອກະສານ, ລະບຽບຕ່າງໆ ທີ່ຕິດພັນກັບວຽກງານບໍລິຫານຂອງສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ ເພື່ອສະເໜີຂັ້ນເທິງຂອງຕົນພິຈາລະນາ;
5. ສ້າງ ແລະ ຄຸ້ມຄອງລະບົບຂໍ້ມູນຂ່າວສານ-ຖານຂໍ້ມູນ ເພື່ອຮັບໃຊ້ວຽກງານການຄົ້ນຄວ້າທາງດ້ານການພັດ ທະນາເສດຖະກິດ-ສັງຄົມ ແລະ ການຝຶກອົບຮົມ-ພັດທະນາພະນັກງານຂະແໜງແຜນການ ແລະ ການລົງທຶນ ທົ່ວປະເທດ;
6. ສັງລວມ, ອອກແບບສິ່ງພິມ ແລະ ເຜີຍແຜ່ບົດຄົ້ນຄວ້າຕ່າງໆ ຕາມການເຫັນດີຂອງຄະນະສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ;

7. ຮັບຜິດຊອບວຽກງານສະໜັບສະໜູນປິ່ນອ້ອມຕ່າງໆພາຍໃນສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະສູນຝຶກອົບຮົມ;
8. ປະຕິບັດໜ້າທີ່ວຽກງານອື່ນໆທີ່ຈຳເປັນ ຕາມການມອບໝາຍ ຂອງຄະນະສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ.

**ມາດຕາ 8 ພະແນກ ຄົ້ນຄວ້ານະໂຍບາຍເສດຖະກິດ**

1. ຄົ້ນຄວ້າສ້າງບັນດາຍຸດທະສາດ, ນະໂຍບາຍ, ແຜນພັດທະນາ ແລະ ກົນໄກຕ່າງໆ ທີ່ກ່ຽວຂ້ອງກັບການພັດທະນາຂະແໜງການຜະລິດ (ກະສິກຳ ແລະ ອຸດສາຫະກຳ), ການບໍລິການ, ລະບົບການເງິນ-ການທະນາຄານ, ງົບປະມານແຫ່ງລັດ, ການຄ້າພາຍໃນ-ຕ່າງປະເທດ ແລະ ຕະຫຼາດແຮງງານ ແລ້ວໃຫ້ຄຳສະເໜີແນະໃນທາງປະຕິບັດທີ່ມີປະສິດທິຜົນ;
2. ຕິດຕາມ, ປະເມີນ ແລະ ຕີລາຄາບັນດາຍຸດທະສາດ ແລະ ນະໂຍບາຍກ່ຽວກັບການພັດທະນາຂະແໜງການຜະລິດ (ກະສິກຳ ແລະອຸດສາຫະກຳ), ການບໍລິການ, ລະບົບການເງິນ-ການທະນາຄານ, ງົບປະມານແຫ່ງລັດ, ການຄ້າພາຍໃນ-ຕ່າງປະເທດ ແລະ ຕະຫຼາດແຮງງານ;
3. ຄົ້ນຄວ້າສ້າງບົດລາຍງານເສດຖະກິດມະຫາພາກ ປະຈຳໄຕມາດ, 6 ເດືອນ ແລະປະຈຳປີ ກ່ຽວກັບການຄຸ້ມຄອງ ແລະ ແກ້ໄຂຄວາມຫຍຸ້ງຍາກຂອງເສດຖະກິດມະຫາພາກ ແລະ ສະພາບການເໜັງຕີງຂອງປັດໄຈຕ່າງໆທີ່ກະທົບໃສ່ເສດຖະກິດມະຫາພາກໃນແຕ່ລະໄລຍະ ເພື່ອລາຍງານໃຫ້ແກ່ຄະນະນຳ ກະຊວງແຜນການ ແລະ ການລົງທຶນ;
4. ເກັບກຳ ແລະ ສ້າງຖານຂໍ້ມູນ ເພື່ອຕິດຕາມສະພາບການພັດທະນາທາງດ້ານເສດຖະກິດທັງສູນກາງ ແລະ ທ້ອງຖິ່ນ ໃນແຕ່ລະໄລຍະ;
5. ຄົ້ນຄວ້າສະພາບການປະຕິຮູບເສດຖະກິດ, ການເຕີບໂຕເສດຖະກິດທີ່ມີຄຸນນະພາບ ແລະ ຍືນຍົງ, ການຫັນປ່ຽນໂຄງປະກອບເສດຖະກິດ ແລະ ການຫັນເປັນອຸດສາຫະກຳທັນສະໄໝ ແລະ ອື່ນໆ;
6. ຄົ້ນຄວ້າ ແລະ ວິໄຈທ່າອ່ຽງ ແລະ ຄວາມສ່ຽງຂອງບັນດາຕົວຊີ້ບອກໃນຂະແໜງການເສດຖະກິດ ທີ່ຕິດພັນກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ;
7. ຄົ້ນຄວ້າ-ຕີລາຄາບັນຫາທີ່ພົ້ນເດັ່ນ ຫຼື ຮີບດ່ວນທາງດ້ານເສດຖະກິດ ຕາມການມອບໝາຍຂອງກະຊວງແຜນການ ແລະ ການລົງທຶນ ແລະ ລັດຖະບານ;
8. ປະກອບສ່ວນເຂົ້າໃນການສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານຄົ້ນຄວ້າ, ຕິດຕາມ ແລະ ລາຍງານການພັດທະນາຂະແໜງການເສດຖະກິດ;
9. ປະຕິບັດໜ້າທີ່ວຽກງານອື່ນໆທີ່ຈຳເປັນ ຕາມການມອບໝາຍຂອງຄະນະສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ.

**ມາດຕາ 9 ພະແນກ ຄົ້ນຄວ້ານະໂຍບາຍສັງຄົມ ແລະ ຫຼຸດຜ່ອນຄວາມທຸກຍາກ**

1. ຄົ້ນຄວ້າ-ສ້າງບັນດາຍຸດທະສາດ ແລະ ນະໂຍບາຍຕ່າງໆທີ່ຕິດພັນກັບການພັດທະນາດ້ານສັງຄົມ ແລະ ແກ້ໄຂຄວາມທຸກຍາກໂດຍສະເພາະ: ດ້ານການພັດທະນາກະສິກຳ ແລະຊົນນະບົດ, ປະຊາກອນ, ການສຶກສາ, ສາທາລະນະສຸກ, ແຮງງານ, ໂພຊະນາການ, ບົດບາດຍິງ-ຊາຍ, ຊາວໜຸ່ມ, ເຍົາວະຊົນ, ເດັກນ້ອຍ ແລະ ອື່ນໆ;
2. ຕິດຕາມ, ປະເມີນ ແລະ ຕີລາຄາບັນດາຍຸດທະສາດ ແລະ ນະໂຍບາຍຕ່າງໆ ທີ່ຕິດພັນກັບການພັດທະນາດ້ານສັງຄົມ ແລະ ແກ້ໄຂຄວາມທຸກຍາກໂດຍສະເພາະ: ດ້ານການພັດທະນາກະສິກຳ ແລະ ຊົນນະບົດ, ປະຊາກອນ, ການສຶກສາ, ສາທາລະນະສຸກ, ແຮງງານ, ໂພຊະນາການ, ບົດບາດຍິງ-ຊາຍ, ຊາວໜຸ່ມ, ເຍົາວະຊົນ, ເດັກນ້ອຍ ແລະ ອື່ນໆ;
3. ເກັບກຳ ແລະສ້າງຖານຂໍ້ມູນ ເພື່ອຕິດຕາມສະພາບການພັດທະນາດ້ານສັງຄົມ ແລະ ຫຼຸດຜ່ອນຄວາມທຸກຍາກ ທັງສູນກາງ ແລະ ທ້ອງຖິ່ນ ໃນແຕ່ລະໄລຍະ;

4. ຄົ້ນຄວ້າ-ວິໄຈທ່າອ່ຽງ ແລະ ຄວາມສ່ຽງຂອງບັນດາຕົວຊີ້ບອກດ້ານຂະແໜງການດ້ານສັງຄົມ ແລະ ຄວາມທຸກຍາກ ທີ່ຕິດພັນກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ;
5. ຄົ້ນຄວ້າ-ຕີລາຄາບັນຫາທີ່ພົ້ນເດັ່ນ ຫຼື ຮີບດ່ວນດ້ານການພັດທະນາດ້ານສັງຄົມ ແລະ ການຫຼຸດຜ່ອນຄວາມທຸກຍາກ ຕາມການມອບໝາຍ ຂອງກະຊວງແຜນການ ແລະ ການລົງທຶນ ແລະ ລັດຖະບານ;
6. ປະກອບສ່ວນເຂົ້າໃນການສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານຄົ້ນຄວ້າ, ຕິດຕາມ ແລະ ລາຍງານການພັດທະນາຂະແໜງສັງຄົມ ແລະການຫຼຸດຜ່ອນຄວາມທຸກຍາກ;
7. ປະຕິບັດໜ້າທີ່ວຽກງານອື່ນໆທີ່ຈຳເປັນ ຕາມການມອບໝາຍ ຂອງຄະນະສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ.

**ມາດຕາ 10 ພະແນກ ຄົ້ນຄວ້ານະໂຍບາຍພັດທະນາເຂດແຄ້ວນ ແລະ ສິ່ງແວດລ້ອມ**

1. ຄົ້ນຄວ້າ-ສ້າງບັນດາຍຸດທະສາດ ແລະ ນະໂຍບາຍການພັດທະນາເຂດແຄ້ວນ, ການເຕີບໂຕສີຂຽວ-ຍືນຍົງ ແລະ ການປ່ຽນແປງດິນຟ້າອາກາດ, ຍຸດທະສາດການເຊື່ອມຈອດ-ເຊື່ອມໂຍງພາຍໃນ ແລະ ອະນຸພາກພື້ນ, ແຜນແມ່ບົດການພັດທະນາເຂດແຄວ້ນ ແລະ ທ້ອງຖິ່ນ ແລະ ເຂດຈຸດສຸມການພັດທະນາລວມທັງເຂດເສດຖະກິດໃນແຕ່ລະໄລຍະ;
2. ຕິດຕາມ, ປະເມີນ ແລະຕີລາຄາບັນດາຍຸດທະສາດ ແລະ ນະໂຍບາຍການພັດທະນາເຂດແຄ້ວນ, ການເຕີບໂຕສີຂຽວ-ຍືນຍົງ ແລະ ການປ່ຽນແປງດິນຟ້າອາກາດ, ຍຸດທະສາດການເຊື່ອມຈອດ-ເຊື່ອມໂຍງພາຍໃນ ແລະ ອະນຸພາກພື້ນ, ແຜນແມ່ບົດການພັດທະນາເຂດແຄວ້ນ ແລະ ທ້ອງຖິ່ນ ແລະ ເຂດຈຸດສຸມການພັດທະນາລວມທັງເຂດເສດຖະກິດໃນແຕ່ລະໄລຍະ;
3. ເກັບກຳ ແລະສ້າງຖານຂໍ້ມູນ ເພື່ອຕິດຕາມສະພາບການພັດທະນາເຂດແຄວ້ນ, ເຂດຈຸດສຸມການພັດທະນາ ແລະ ການພັດທະນາສິ່ງແວດລ້ອມ ໃນແຕ່ລະໄລຍະ;
4. ຄົ້ນຄວ້າ-ວິໄຈທ່າອ່ຽງ ແລະຄວາມສ່ຽງຂອງບັນດາຕົວຊີ້ບອກດ້ານການພັດທະນາເຂດແຄ້ວນ, ການເຕີບໂຕສີຂຽວ ແລະ ສິ່ງແວດລ້ອມ ທີ່ຕິດພັນກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ;
5. ຄົ້ນຄວ້າ-ຕີລາຄາບັນຫາທີ່ພົ້ນເດັ່ນ ຫຼື ຮີບດ່ວນດ້ານການພັດທະນາເຂດແຄວ້ນ ແລະ ສິ່ງແວດລ້ອມ ຕາມການມອບໝາຍຂອງກະຊວງ ແຜນການ ແລະ ການລົງທຶນ ແລະ ລັດຖະບານ;
6. ປະກອບສ່ວນເຂົ້າໃນການສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານຄົ້ນຄວ້າ, ຕິດຕາມ ແລະ ລາຍງານການພັດທະນາເຂດແຄວ້ນ ແລະ ສິ່ງແວດລ້ອມ;
7. ປະຕິບັດໜ້າທີ່ວຽກງານອື່ນໆທີ່ຈຳເປັນ ຕາມການມອບໝາຍຂອງຄະນະສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ.

**ມາດຕາ 11 ພະແນກ ຝຶກອົບຮົມ**

1. ຄົ້ນຄວ້າ, ສ້າງ, ປັບປຸງ, ພັດທະນາ, ສັງລວມ, ປະເມີນ ແລະ ຄຸ້ມຄອງແບບລວມສູນ ຫຼັກສູດຝຶກອົບຮົມ ໄລຍະສັ້ນ, ກາງ ແລະ ໄລຍະຍາວ ໃນດ້ານວິຊາການທີ່ກ່ຽວຂ້ອງກັບວຽກງານເສດຖະກິດ-ແຜນການ ແລະ ສາຂາວິຊາທີ່ເໝາະສົມທີ່ມີຄວາມຈຳເປັນ ໃຫ້ສອດຄ່ອງກັບແຜນຍຸດທະສາດການພັດທະນາຊັບພະຍາກອນມະນຸດຂອງຂະແໜງແຜນການ ແລະ ການລົງທຶນ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຕ່ລະໄລຍະ;
2. ຈັດຝຶກອົບຮົມດ້ານວິຊາການ ແລະ ຍົກລະດັບຄວາມຮູ້ຄວາມສາມາດ, ທັກສະໃນການປະຕິບັດໜ້າທີ່ວຽກງານການຄຸ້ມຄອງເສດຖະກິດ-ແຜນການ ໃຫ້ພະນັກງານທີ່ກ່ຽວຂ້ອງຕາມແຜນການກໍ່ສ້າງບຸກຄະລາກອນ ຂອງຂະແໜງ ແຜນການ ແລະ ການລົງທຶນ ຂັ້ນສູນກາງ ແລະ ທ້ອງຖິ່ນ;

3. ເກັບກຳ ແລະສຳຫຼວດ-ປະເມີນ ຄວາມຕ້ອງການໃນການຝຶກອົບຮົມຂອງພະນັກງານ-ລັດຖະກອນໃນວຽກງານເສດຖະກິດ-ແຜນການຂັ້ນສູນກາງ ແລະທ້ອງຖິ່ນ, ນຳໃຊ້ຂໍ້ມູນການສຳຫຼວດ-ປະເມີນຜົນເພື່ອຮັບໃຊ້ໃນການສ້າງ, ພັດທະນາຫຼັກສູດ ແລະ ຄູ່ມື ໃຫ້ແທດເໝາະກັບສະພາບຕົວຈິງ ຂອງພະນັກງານ-ລັດຖະກອນ;
4. ຂຶ້ນແຜນ ແລະ ນຳໃຊ້ງົບປະມານຮັບໃຊ້ຈັດຝຶກອົບຮົມວຽກງານຄຸ້ມຄອງເສດຖະກິດ-ແຜນການ ໃຫ້ຂະແໜງແຜນການ ແລະການລົງທຶນ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ;
5. ປະສານງານພາກສ່ວນທີ່ກ່ຽວຂ້ອງພາຍໃນຂະແໜງແຜນການ ແລະ ການລົງທຶນ ໃນການຄົ້ນຄວ້າ, ສັງລວມຫົວຂໍ້ຝຶກອົບຮົມ ຕາມການສະເໜີຂອງພາກສ່ວນກ່ຽວຂ້ອງ ເພື່ອສະເໜີຂັ້ນເທິງພິຈາລະນາອະນຸມັດ;
6. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຄຸ້ມຄອງເກັບກຳສັງລວມ-ຂໍ້ມູນແບບລວມສູນ ໃນວຽກຝຶກອົບຮົມທາງດ້ານເສດຖະກິດ-ແຜນການ ເພື່ອສະຫຼຸບລາຍງານໃຫ້ຄະນະນຳ ກະຊວງ;
7. ສຶກສາຄົ້ນຄວ້າ, ວິເຄາະວິໄຈ, ພັດທະນາຮູບແບບ, ວິທີການ ແລະເຕັກນິກ ການຝຶກອົບຮົມ, ຮ່າງຂໍ້ກຳນົດ, ກົດລະບຽບຂອງການຝຶກອົບຮົມ ຂອງແຕ່ລະຫຼັກສູດ, ແຕ່ລະຫົວຂໍ້ວິຊາ ເພື່ອເຮັດໃຫ້ການຝຶກອົບຮົມມີປະສິດທິພາບ ແລະ ປະສິດທິຜົນສູງ;
8. ສ້າງ, ພັດທະນາ ແລະ ປະເມີນວິທະຍາກອນ,ຜູ້ຊ່ວຍວິທະຍາກອນ, ຜູ້ບໍລິຫານຝຶກອົບຮົມ ແລະ ສຳມະນາກອນທັງສູນກາງ ແລະ ທ້ອງຖິ່ນ ຕາມຄວາມຮຽກຮ້ອງຕ້ອງການຕອບສະໜອງໄດ້ຕາມຫລັກສູດຂອງວຽກງານຄຸ້ມຄອງເສດຖະກິດ-ແຜນການ;
9. ພົວພັນ-ຮ່ວມມື ແລະ ແລກປ່ຽນບົດຮຽນກ່ຽວກັບໂຄງການຝຶກອົບຮົມທີ່ກ່ຽວຂອງກັບບັນດາອົງການຈັດຕັ້ງຄູ່ຮ່ວມພັດທະນາ ທັງພາຍໃນ ແລະ ຕ່າງປະເທດ;
10. ໂຄສະນາປະຊາສຳພັນທາງສື່ຕ່າງໆໃຫ້ແກ່ພາຍໃນ ແລະ ພາຍນອກ ກ່ຽວກັບວຽກງານ ການຈັດຝຶກອົບຮົມວຽກງານຄຸ້ມຄອງເສດຖະກິດ-ແຜນການ;
11. ປະຕິບັດໜ້າທີ່ວຽກງານອື່ນໆທີ່ຈຳເປັນ ຕາມການມອບໝາຍຂອງຄະນະສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ.

## ໝວດທີ 5
## ຫຼັກການ ແລະແບບແຜນວິທີເຮັດວຽກ

ມາດຕາ **11 ຫຼັກການ**

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ລະບອບຫົວໜ້າດຽວ, ຕົກລົງເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນທຸກລະດັບ;
2. ທຸກການເຄື່ອນໄຫວວຽກງານແມ່ນອີງໃສ່ກົດໝາຍ, ຫຼັກການລວມຂອງພັກ-ລັດ, ນຳເອົາແນວທາງນະໂຍບາຍຂອງພັກ-ລັດຖະບານ ແລະ ນຳເອົາແຜນການ 5 ປີຂອງກະຊວງ, ອົງການທຽບເທົ່າກະຊວງມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

ມາດຕາ **12 ແບບແຜນວິທີເຮັດວຽກ**

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບອົງການທີ່ກ່ຽວຂ້ອງ;
2. ເຮັດວຽກມີການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້ຜົນເສຍ, ພ້ອມທັງປະຕິບັດລະບອບສ່ອງແສງຢ່າງເປັນປົກກະຕິ ແລະ ເຂັ້ມງວດ;

3. ປະຕິບັດລະບອບປະຊຸມປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ແລະ ປະຕິບັດລະບອບລາຍງານໃຫ້ຂັ້ນເທິງ ແລະ ລັດຖະບານຢ່າງເປັນປົກກະຕິ;
4. ການເຄື່ອນໄຫວ ແລະ ການເຮັດວຽກຂອງສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ. ຕ້ອງຢຶດໝັ້ນຕາມແນວ ທາງນະໂຍບາຍຂອງພັກ, ນິຕິກຳຂອງລັດ, ລະບຽບການ ແລະ ຂໍ້ຕົກລົງ ກໍ່ຄືຄຳສັ່ງຂອງ ກະຊວງ ແຜນການ ແລະ ການລົງທຶນ ຢ່າງເຂັ້ມງວດ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 13 ງົບປະມານ ແລະຕາປະທັບ**

ສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ (ທຽບເທົ່າກົມ) ມີງົບປະມານ ແລະ ຕາປະທັບ ເພື່ອ ຮັບໃຊ້ໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 14 ການຈັດຕັ້ງປະຕິບັດ**

ສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ, ກະຊວງແຜນການ ແລະ ການລົງທຶນ ແລະ ທຸກ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 15 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ປ່ຽນແທນຂໍ້ຕົກລົງ ສະບັບເລກທີ 0255/ກຜທ, ລົງວັນທີ 4 ກຸມພາ 2022 ແລະ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງແຜນການ ແລະ ການລົງທຶນ
ລັດຖະມົນຕີ

ຄຳເຈນ ວົງໂພສີ